FROM PRIMARY TO HIGH SCHOOL: THE NEXT BIG STEP
HOW PARENTS CAN HELP
INFORMATION SHEET 2

# ຈາກໂຮງຮຽນປະຖົມສູ່ໂຮງຮຽນມັທຍົມ: ບາດກ້າວໃໝ່ ອັນສຳຄັນ

## ພໍ່ແມ່ຈະຊ່ວຍໄດ້ຢ່າງໃດ







ການໄປເຂົ້າໂຮງຮຽນມັທຍົມຈະເປັນປະສົບການອັນໃໝ່ສຳລັບລູກຂອງທ່ານ. ໂຮງຮຽນອາດຈະມີນັກຮຽນເປັນຈຳນວນຫຼາຍ ແລະ ລູກທ່ານຈະມີນາຍຄູຫຼາຍຄົນແລະມີຫ້ອງຮຽນຫຼາຍຫ້ອງ ແລະ ພວກເຂົາຍັງຈະຕ້ອງຖືປຶ້ມຮຽນຈາກຫ້ອງນຶ່ງໄປຫາຫ້ອງນຶ່ງ ອີກນຳ.

ກ່ອນທີ່ລູກຂອງທ່ານຈະເລີ້ມເຂົ້າໂຮງຮຽນມັທຍົມ ຈົ່ງເວົ້າລົມ ກັບພວກເຂົາເຈົ້າກ່ຽວກັບສະຖານະການທີ່ແຕກຕ່າງ ແລະ ຄົນທີ່ພວກເຂົາເຈົ້າອາດຈະພົບພໍ້ຢູ່ໃນໂຮງຮຽນ ແລະ ເວົ້າເຖິງ ໂອກາດທີ່ພວກເຂົາເຈົ້າຈະໄດ້ພົບໝູ່ໃໝ່.

ດ້ວຍການຊ່ວຍເຫຼືອຂອງຄອບຄົວ ແລະ ພະນັກງານຢູ່ໃນໂຮງ ຮຽນ ຕາມປົກກະຕິແລ້ວ ພວກນັກຮຽນກໍຈະປັບຕົວເຂົ້າກັບ ສະຖານະການໃໝ່ຂອງພວກເຂົາໄດ້.

**ກະຣຸນາສັງເກດ:**
ມັນເປັນສິ່ງສຳຄັນທີ່ທ່ານຕ້ອງແຈ້ງໃຫ້ທ່ານຄູໃຫຍ່ຂອງທ່ານ ໃຫ້ຊາບກ່ອນທີ່ລູກທ່ານຈະເລີ້ມເຂົ້າໂຮງຮຽນ ຖ້າລູກທ່ານມີ ອາການແພ້ ຫຼືມີບັນຫາດ້ານສຸຂພາບໃດໆ. ອັນນີ້ສາມາດບອກໄດ້ດ້ວຍການຂຽນໃສ່ບ່ອນຫວ່າງທີ່ມີໄວ້ໃຫ້ຢູ່ໃນຟອຣ໌ມຈົດຊື່ ເຂົ້າຮຽນ.

ນອກນີ້ ທ່ານຍັງຄວນຕ້ອງແຈ້ງໃຫ້ທາງໂຮງຮຽນຊາບໃນທັນທີ ທີ່ທ່ານຮູ້ວ່າມີອາການແພ້ຫຼື ບັນຫາດ້ານສຸຂພາບທີ່ເກີດຂື້ນໃໝ່ໆ.

### ນາຍຄູໃໝ່

ຢູ່ໃນໂຮງຮຽນມັທຍົມ ບັນດານັກຮຽນອາດຈະມີນາຍຄູເຖິງແປດ ຄົນຫຼືຫຼາຍກວ່ານັ້ນ ນອກຈາກນີ້ ຍັງມີຜູ້ໃຫ້ຄຳແນະນຳນັກຮຽນ ເພື່ອຊ່ວຍເຫຼືອແລະອູ້ມຊູນັກຮຽນອີກນຳ. ມັນເປັນຂອງທັມມະດາ ທີ່ບັນດານັກຮຽນໃໝ່ໃນ Year 7 ທີ່ຈະຮູ້ສຶກກັງວົນໃນເຣື່ອງນີ້.

ມັນເປັນສິ່ງສຳຄັນທີ່ຕ້ອງບອກໃຫ້ພວກເຂົາເຈົ້າຮູ້ວ່າມີຄົນຄອຍ ຊ່ວຍເຫຼືອພວກເຂົາເຈົ້າຢູ່ ແລະ ພວກເຂົາເຈົ້າກໍບໍ່ຄວນລັງເລໃຈ ໃນການຖາມຄຳຖາມໃດໆ.

### ຕາຕລາງເວລາ

ວິຊາຮຽນຢູ່ໃນໂຮງຮຽນມັທຍົມນັ້ນ ຕາມປົກກະຕິແລ້ວຈະສອນ ໃນບົດຮຽນເປັນເວລາ40 ຫາ 60ນາທີ ຊຶ່ງເອີ້ນວ່າ 'Periods'. ແຕ່ລະວິຊາຈະຖືກສອນເປັນເວລານຶ່ງ ຫຼື ສອງ Periods ໃນແຕ່ລະເທື່ອ. ເພື່ອຈະຕິດຕາມບົດຮຽນ ແລະ ຫ້ອງຮຽນຂອງພວກເຂົາໃຫ້ທັນ ລູກທ່ານຈະໄດ້ຮັບຕາຕລາງ ເວລາທີ່ບົ່ງບອກວິຊາ ເວລາຂອງPeriods ແລະ ບ່ອນຢູ່ຂອງ ຫ້ອງຮຽນ.

ມັນເປັນຄວາມຄິດທີ່ດີໃນການຊ່ວຍລູກທ່ານ ກວດເບິ່ງຕາຕລາງ ເວລາຂອງພວກເຂົາເຈົ້າ ໃນເວລາທີ່ພວກເຂົາ ເຈົ້າມາເຖິງເຮືອນ ທຸກໆແລງ ເພື່ອວ່າພວກເຂົາເຈົ້າຈະໄດ້ແນ່ໃຈວ່າ ຈະຈັດກຽມ ທຸກໆຢ່າງທີ່ຕ້ອງການສຳລັບມື້ອື່ນໃສ່ກະເປົາຮຽນ ເຊັ່ນວ່າ ປຶ້ມ ເຄື່ອງຂຽນ ເຄື່ອງແບບPE (ກິລາ) ແລະ ເຄື່ອງຫຼິ້ນກິລາ.

### ໝູ່ໃໝ່

ການຄົບໝູ່ໃໝ່ບາງຄັ້ງກໍເປັນສິ່ງທີ່ສຳຄັນທີ່ສຸດອັນນຶ່ງທີ່ລູກທ່ານ ອາດຈະປະເຊີນໃນເມື່ອພວກເຂົາເຈົ້າເລີ້ມເຂົ້າ Year 7. ຈົ່ງຊຸກຍູ້ລູກທ່ານໃຫ້ເຂົ້າຮ່ວມກິຈກັມຕ່າງໆ ເພື່ອວ່າພວກ ເຂົາເຈົ້າຈະໄດ້ທຳຄວາມຮູ້ຈັກກັບຄົນອື່ນໆ ແລະ ມີຄວາມສນຸກສນານອີກນຳ.

### ການຮ່ວມມືຂອງພໍ່ແມ່

ໂຮງຮຽນມັທຍົມຂອງພວກເຮົາຍິນດີຕ້ອນຮັບການຮ່ວມມື ແລະ ການອຸດໜູນ ຂອງບັນດາພໍ່ແມ່

ກຸ່ມພໍ່ແມ່ເຊັ່ນ ສະມາຄົມ P&C Association (ສະມາຄົມ ພໍ່ແມ່ແລະພົລເມືອງ)ໃຫ້ໂອກາດທ່ານ ເຂົ້າມາພົວພັນກັບຊີວິດ ຂອງໂຮງຮຽນ ແລະ ເຂົ້າຮ່ວມໃນການຕັດສິນໃຈ. ການອາສາ ສມັກໃນການສລອງຕ່າງໆຂອງໂຮງຮຽນ ແລະຢູ່ໃນຫ້ອງຮຽນ ອາດເປັນທາງນຶ່ງທີ່ຈະໄດ້ພົບກັບພໍ່ແມ່ຄົນອື່ນໆ

NEW SOUTH WALES
DEPARTMENT
OF EDUCATION
AND TRAINING

LAO

ແລະພະນັກງານ ຂອງໂຮງຮຽນ. ພວກເຮົາຂໍສະແດງ ຄວາມຮູ້ບຸນຄຸນໃນ ການຊ່ວຍເຫຼືອໃດໆທີ່ທ່ານໄດ້ ໃຫ້ແກ່ທາງໂຮງຮຽນ.

## ການຊ່ວຍເຫຼືອນັກຮຽນທີ່ມີຄວາມຕ້ອງການພິເສດ

ໃນຖານະທີ່ເປັນພໍ່ແມ່ ຫຼື ຜູ້ດູແລຂອງເດັກທີ່ມີຄວາມພິການ ຫຼື ມີຄວາມລຳບາກໃນການຮຽນໜັງສື ທ່ານຈະໄດ້ຮັບຄວາມຊ່ວຍເຫຼືອຈາກຫຼາຍຄົນຊຶ່ງຈະ ເຮັດວຽກຮ່ວມກັບທ່ານເພື່ອໃຫ້ໄດ້ ທາງເລືອກທີ່ດີທີ່ສຸດ ສຳລັບລູກທ່ານ.

ທາງເລືອກຕ່າງໆທີ່ມີໄວ້ໃຫ້ຢູ່ໃນໂຮງຮຽນມັທຍົມ ຮວມມີ:

- ຫ້ອງຮຽນທັມມະດາຢູ່ໃນໂຮງຮຽນທັມມະດາ
- ຫ້ອງຮຽນທີ່ໃຫ້ການອູ້ມຊູນັກຮຽນ ໃນໂຮງຮຽນທັມມະດາ
- ໂຮງຮຽນທີ່ມີບໍຣິການການຊ່ວຍເຫຼືອສະເພາະ

ກ່ອນທີ່ຈະຈົດຊື່ລູກທ່ານເຂົ້າຮຽນ ທ່ານຈະຖືກຂໍ ໃຫ້ຕິດຕໍ່ຫ້ອງ ການເຂດໃນທ້ອງຖິ່ນຂອງທ່ານ ເພື່ອວ່າພະນັກງານຂອງພວກ ເຮົາຈະສາມາດປະເມີນເບິ່ງ ທາງເລືອກຕ່າງໆຂອງທ່ານ ແລະ ຊ່ວຍທ່ານ ໃຫ້ເລືອກເອົາໂຮງຮຽນທີ່ເໝາະສົມສຳລັບລູກທ່ານ.

## ເຄື່ອງແບບ ແລະ ບ່ອນຂາຍເຄື່ອງແບບນັກຮຽນ

ດ້ວຍການນຸ່ງເຄື່ອງໃຫ້ລູກທ່ານດ້ວຍເຄື່ອງແບບນັກຮຽນທີ່ຖືກຕ້ອງ ໃນມື້ທຳອິດ ຈະເຮັດໃຫ້ພວກເຂົາເຈົ້າມີ ຄວາມຮູ້ສຶກເປັນເຈົ້າຂອງໂຮງຮຽນໃໝ່ຂອງພວກເຂົາ. ໂຮງຮຽນຈະເປີດ school clothing pool (ບ່ອນຂາຍເຄື່ອງແບບນັກຮຽນຢູ່ໃນໂຮງຮຽນ) ຫຼື ທາງໂຮງຮຽນ ສາມາດແນະນຳທ່ານວ່າຮ້ານຄ້າບ່ອນໃດທີ່ ຂາຍເຄື່ອງແບບຂອງພວກເຂົາ.

## ບັດເດີນທາງ

ຟອຣ໌ມສຳລັບຂໍບັດເດີນທາງທາງຣົດໄຟ ຣົດບັສ ແລະ/ຫຼື ເຮືອ ຈະມີໄວ້ໃຫ້ຢູ່ທີ່ໂຮງຮຽນມັທຍົມຂອງ ລູກທ່ານໃນເທີມ4. ຟອຣ໌ມ ເຫຼົ່ານີ້ຍັງຈະຖືກສົ່ງໄປ ໃຫ້ທ່ານທາງໄປສະນີພ້ອມກັບຟອຣ໌ມຈົດຊື່ເຂົ້າຮຽນ. ຟອຣ໌ມນີ້ຕ້ອງສົ່ງຄືນໄປໃຫ້ໂຮງຮຽນມັທຍົມກ່ອນສິ້ນ ປີໂຮງຮຽນ ເພື່ອໃຫ້ແນ່ໃຈວ່າບັດເດີນທາງມີໄວ້ພ້ອມ ສຳລັບການ ເລີ້ມຕົ້ນໂຮງຮຽນປີໜ້າ.

ກະຊວງຄົມມະນາຄົມ ເປັນຜູ້ຈັດການໂຄງການການເດີນທາງ ຂອງນັກຮຽນ. ຖ້າທ່ານມີຄຳຖາມຕື່ມ ກະຣຸນາໂທຣະສັບຫາກະຊວງຄົມມະນາຄົມ ຕາມເບີ 1800 227 774 ຫຼື (02) 9891 8900.

## ການສນັບສນຸນໂຮງຮຽນ ແລະ ຣາຍຈ່າຍຄ່າຮຽນ

ໂຮງຮຽນມັທຍົມຫຼວງມີຣາຍຈ່າຍຢູ່ສອງແບບ. ມີການຂໍການ ບໍຣິຈາກອັນທັມມະດາແບບສມັກໃຈ ເພື່ອ ຊ່ວຍທາງໂຮງຮຽນໃຫ້ ມີຊັພຍາກອນ ແລະ ໂອກາດການຮຽນໃຫ້ແກ່ບັນດານັກຮຽນ.

ນອກຈາກນີ້ແລ້ວ ຍັງມີຄ່າຮຽນວິຊາສະເພາະ ເຊັ່ນ ວິຊາ ເທັກໂນໂລຈີດ້ານອາຫານ ແລະ ສິລປະການແຕ້ມ. ຄ່າຮຽນວິຊາ ນີ້ຊ່ວຍຈ່າຍຄ່າອຸປກອນການຮຽນທີ່ລູກ ທ່ານຕ້ອງໃຊ້ໃນແຕ່ລະ ວິຊາເຫຼົ່ານີ້.

ຖ້າທ່ານມີຄວາມລຳບາກໃນດ້ານການເງິນ ກະຣຸນາເວົ້າລົມກັບ ທ່ານຄູໃຫຍ່ຂອງທ່ານ. ການຊ່ວຍ ໃນດ້ານຄ່າຮຽນວິຊາ ພ້ອມທັງ ຣາຍຈ່າຍອື່ນໆເຊັ່ນ ຄ່າເຄື່ອງແບບນັກຮຽນ ການໄປທັສນະສຶກສາ ແລະ ໄປນອນຄ້າຍ ກໍອາດຈະມີໃຫ້.

## ໂທຣະສັບມືຖື

ຢູ່ໃນໂຮງຮຽນພວກເຮົາ ການໃຊ້ໂທຣະສັບມືຖືແລະເຄື່ອງສື່ສານ ອີເລັກໂທຣນິກອື່ນໆ ພາຍ ໃນຊົ່ວໂມງຮຽນແມ່ນຖືກຫ້າມ ແລະ ແນ່ນອນທີ່ສຸດ ບໍ່ສາມາດໃຊ້ໂທຣະສັບພາຍໃນເວລາຮຽນ.

ບັນດາພໍ່ແມ່ໄດ້ຖືກຂໍໃຫ້ຫຼີກເວັ້ນການໂທຣະສັບ ຫຼື ສົ່ງຂໍ້ຄວາມ SMS ໄປຫາລູກພວກເຂົາພາຍ ໃນເວລາເຂົ້າຮຽນຖ້າພໍເປັນໄປໄດ້. ຖ້າຫາກຈຳເປັນ ທ່ານສາມາດຝາກຂໍ້ຄວາມຫານັກຮຽນ ໄດ້ໂດຍ ຜ່ານທາງຫ້ອງການໂຮງຮຽນ.

## ບໍຣິການ ນາຍພາສາທາງໂທຣະສັບ

ຖ້າທ່ານຕ້ອງການນາຍພາສາເພື່ອຊ່ວຍທ່ານໃນການ ຕິດຕໍ່ທ່ານຄູໃຫຍ່ຂອງທ່ານ ກະຣຸນາໂທຣະສັບຫາ ບໍຣິການ ນາຍພາສາທາງໂທຣະສັບ ຕາມເບີ 131 450 ແລ້ວຂໍເອົານາຍພາສາທີ່ປາກພາສາລາວ. ນາຍພາສາຈະໂທຫາທ່ານຄູໃຫຍ່ ແລະ ຈະຢູ່ກັບສາຍ ເພື່ອຊ່ວຍໃນການເວົ້າລົມຂອງທ່ານ. ທ່ານບໍ່ຕ້ອງຈ່າຍ ຄ່າໃດໆໃນບໍຣິການນີ້.

© May 2006
NSW Department of Education and Training

GPO Box 33
Sydney NSW 2001
T 9561 8000
www.det.nsw.edu.au

NSW Public Schools - Leading the way
ໂຮງຮຽນຫຼວງ ຣັດ NSW – ນຳພາແນວທາງ

NEW SOUTH WALES DEPARTMENT OF EDUCATION AND TRAINING

## ຊອກຮູ້ຕື່ມອີກ

ເພື່ອເອົາຂໍ້ມູນເພີ້ມຕື່ມ
ຈົ່ງເວົ້າລົມກັບທ່ານຄູໃຫຍ່ ຂອງທ່ານ ຫຼື
ຕິດຕໍ່ຫ້ອງການເຂດຂອງທ່ານ ຫຼື ເປີດເບິ່ງ
www.schools.nsw.edu.au

ເພື່ອເອົາຂໍ້ມູນທີ່ແປແລ້ວ ຈົ່ງເປີດເອົາທີ່
www.det.nsw.edu.au/
languagesupport